### 31. ຄ່າໃຊ້ຈ່າຍທີ່ຕິດພັນກັບການຊື້-ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບລາວ

ຄວາມຈິງແລ້ວ ຄ່າໃຊ້ຈ່າຍທີ່ຕິດພັນກັບການຊື້-ຂາຍຮຸ້ນ ແມ່ນ ຄ່າທຳນຽມໃນການຊື້-ຂາຍ, ຊຶ່ງຜູ້ຊື້ ແລະ ຜູ້ຂາຍ ຕ້ອງໄດ້ຊຳລະໃນເວລາເຮັດທຸລະກຳການຊື້-ຂາຍຮຸ້ນສຳເລັດ. ປະຈຸບັນການຊື້-ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບລາວ ໂດຍລວມແລ້ວ ຜູ້ຊື້ ຈະຕ້ອງໄດ້ຊຳລະຄ່າທຳນຽມການຊື້ 0.70% ຂອງມູນຄ່າການຊື້ຮຸ້ນ ແລະ ຜູ້ຂາຍ ຈະຕ້ອງຊຳລະຄ່າທຳນຽມການຂາຍ 1.00% ຂອງມູນຄ່າການຂາຍຮຸ້ນ, ຊຶ່ງມີລາຍລະອຽດດັ່ງຕາຕະລາງລຸ່ມນີ້:

| ລາຍການ | ຜູ້ຊື້ | ຜູ້ຂາຍ |
|---|---|---|
| ບໍລິສັດຫຼັກຊັບ | 0.30% | 0.30% |
| ຕະຫຼາດຫຼັກຊັບລາວ | 0.30% | 0.30% |
| ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ | 0.09% | 0.09% |
| ກອງທຶນປົກປ້ອງຄວາມສ່ຽງ | 0.01% | 0.01% |
| ລັດຖະບານ | - | 0.30% |
| **ລວມ** | 0.70% | 1.00% |

ຄ່າໃຊ້ຈ່າຍດັ່ງກ່າວ ແມ່ນຄ່າໃຊ້ຈ່າຍທີ່ໄດ້ຈັດເກັບໃນປະຈຸບັນ, ແຕ່ໃນອານາຄົດອາດມີການປັບປຸງ ເພື່ອຊຸກຍູ້ໃຫ້ມວນຊົນມາລົງທຶນໃນຕະຫຼາດຫຼັກຊັບລາວຫຼາຍຂຶ້ນ ກໍຄືການພັດທະນາຕະຫຼາດທຶນຂອງ ສປປ ລາວ ໃຫ້ຂະຫຍາຍຕົວຍິ່ງຂຶ້ນ.

ຜູ້ລົງທຶນຕ້ອງຄຳນຶງສະເໝີວ່າ: **ທຸກການລົງທຶນມີຄວາມສ່ຽງ ຜູ້ລົງທຶນຄວນສຶກສາຂໍ້ມູນໃຫ້ຖີ່ຖ້ວນກ່ອນຕັດສິນໃຈລົງທຶນ.**